ສຳນັກງານໃຫຍ່

ເລກທີ: 1145 /ທຄຕລ ...2022...

ນະຄອນຫຼວງວຽງຈັນ, ວັນທີ: 13 JUN 2022

# ໜັງສືແຈ້ງເຊີນ

**ເຖິງ** : ບັນດາບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍເຄື່ອງເຟີນີເຈີ.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາ ຕັ່ງນັ່ງ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງທ່ານຊາບບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍເຄື່ອງເຟີນີເຈີ ທີ່ມີຄວາມສົນໃຈ ສະໜອງເຟີນີເຈີໃຫ້ແກ່ ທຄຕລ ດັ່ງມີລາຍລະອຽດຂ້າງລຸ່ມນີ້:

| ລ.ດ | ລາຍລະອຽດ | ຈຳນວນ |
|---|---|---|
| 1 | ຕັ່ງນັ່ງ ຫຸ້ມຜ້າ, ຂາເຫຼັກ ,ສີດຳ (ຕາມຮູບຕົວຢ່າງ)<br>ຂະໜາດ:W63 X D61 X H86  | 21 ໜ່ວຍ |

- **ເງື່ອນໄຂຂອງບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍ ທີ່ມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບດັ່ງນີ້:**
- **<u>ເອກະສານ ຊອງທີ່1:</u>**
  1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍເຄື່ອງເຟີນີເຈີ, ດຳເນີນທຸລະກິດ ຢ່າງໜ້ອຍ 01 ປີຂຶ້ນໄປ, ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2021.
  2. ກຳນົດຍື່ນຊອງລາຍລະອຽດສິນຄ້າ, ການຮັບປະກັນສິນຄ້າ, ໄລຍະເວລາໃນການຈັດສົ່ງ ແລະ ຂໍ້ມູນຕ່າງໆຕາມ format ທີ່ຕິດຄັດມາພ້ອມນີ້ ແລະ ຍື່ນກ່ອນ **ວັນທີ 21/06/2022 ເວລາ 11:00 ໂມງ** ໂດຍການສົ່ງຟາຍເຂົ້າ E-mail: procurement@bcel.com.la ຫຼື ສົ່ງໄດ້ທີ່ພະແນກຫ້ອງການບໍລິຫານ-ການເງິນ ຊັ້ນ 4 ຕຶກ C ຂາເຂົ້າ - ຂາອອກ.
- **<u>ເອກະສານ ຊອງທີ່2:</u> (ປິດຊອງ)**
  1. ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍແຕ່ລະລາຍການ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ.
  2. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 21/07/2022)** ຫຼື ແຊັກທີ່ວິຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.
  3. ໃນວັນພະຫັດ **ວັນທີ 30/06/2022 ເວລາ 09:30 ໂມງ** ແມ່ນມື້ເປີດຊອງປະມູນ ສະນັ້ນຜູ້ສະໜອງທີ່ຜ່ານການຄັດເລືອກຈາກເອກະສານສານຊອງທີ 1 ມາຍື່ນຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຕົວແທນໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 3 ອາຄານ C.

- **<u>ໝາຍເຫດ:</u>** ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງ ຕາມການກຳນົດຂ້າງເທິງ.

❖ **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

1. ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຮັບຜິດຊອບຄ່າທຳນຽມໃນການຈົດທະບຽນສັນຍາ.
2. ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ແມ່ນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.

- **ການຊຳລະຈະຈ່າຍເປັນງວດດຽວ 100 %** ຂອງມູນຄ່າ ພາຍໃນ 15 ວັນລັດຖະການ ພາຍຫຼັງໄດ້ຮັບເຄື່ອງຄົບຖ້ວນ ແລະ ໄດ້ຮັບການຢັ້ງຢືນຈາກພາກສ່ວນກ່ຽວຂ້ອງ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ຄຳພຸດ ສິດທິລາດ

## (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............/ທຄຕລ, ລົງວັນທີ .......................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ 2020 | ໃບອະນຸຍາດດຳເນີນທຸລະກິດ 2021 | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ......... | (xxx/ 02.01.2015) | (xxx/ 02.01.2015) | (xxx/ 02.01.2015) | .... ປີ | (ໃຫ້ລະບຸ) | (ໃຫ້ລະບຸລະອຽດ) | ປະເທດ....... | .... ປີ | ...... | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ ........................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ:

